ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຄັງເງິນແຫ່ງຊາດ

# ມະຕິກອງປະຊຸມ
# (ໃຊ້ຕາງບົດບັນທຶກກອງປະຊຸມ)

ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຄັງເງິນ ປີ 2021 ແລະ ທິດທາງແຜນການ ປີ 2022 ໄດ້ດຳເນີນເລີ່ມແຕ່ວັນທີ 13-14 ມັງກອນ ປີ 2022 ເປັນເວລາ ໜຶ່ງວັນເຄິ່ງ, ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ພູທະນູເພັດ ໄຊສົມບັດ ຄະນະປະຈຳພັກກະຊວງການເງິນ, ຮອງລັດຖະມົນຕີ ກະຊວງການເງິນ (ຜູ້ຊີ້ນຳວຽກງານຄັງເງິນ). ເຂົ້າຮ່ວມກອງປະຊຸມປະກອບມີ ທ່ານ ນາງ ວັນພອນ ພົມມະສອນ ຄະນະປະຈຳພັກກະຊວງການເງິນ, ຫົວໜ້າຄັງເງິນແຫ່ງຊາດ, ຮອງຫົວໜ້າຄັງເງິນແຫ່ງຊາດ, ຫົວໜ້າຄັງເງິນປະຈຳນະຄອນຫຼວງ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ວິຊາການຈາກບັນດາພະແນກການອ້ອມຂ້າງຄັງເງິນແຫ່ງຊາດ, ພ້ອມນັ້ນມີບັນດາແຂກຖືກເຊີນຈາກບັນດາ ກະຊວງອ້ອມຂ້າງ, ກົມອ້ອມຂ້າງກະຊວງການເງິນ, ກົມບໍລິການທະນາຄານແຫ່ງ ສປປ ລາວ, ບັນດາທະນາຄານທຸລະກິດຂອງລັດ, ທະນາຄານທຸລະກິດ, ບໍລິສັດສະຕາຟິນເທັກຈຳກັດ ແລະ ບໍລິສັດ ລາວພັດທະນາຊອບແວຈຳກັດ, ນອກຈາກນັ້ນຍັງມີຫົວໜ້າ-ຮອງຫົວໜ້າ ຄັງເງິນປະຈຳ 17 ແຂວງ ແລະ ຄັງເງິນປະຈຳເມືອງເທດສະບານ ທີ່ເຂົ້າຮ່ວມກອງປະຊຸມ ໂດຍຜ່ານລະບົບ ວີດີໂອ ທາງໄກ ລວມຜູ້ເຂົ້າຮ່ວມທັງໝົດ ຈຳນວນ: 267 ທ່ານ, ຍິງ 130 ທ່ານ.

ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ, ຜູ້ແທນກອງປະຊຸມໄດ້ຮັບຟັງການນຳສະເໜີບັນດາເອກະສານຕ່າງໆ ຈາກຄະນະຮັບຜິດຊອບບາງເນື້ອໃນຕົ້ນຕໍ ດັ່ງລຸ່ມນີ້:

1. ຮ່າງ ບົດສະຫຼຸບຕີລາຄາໂດຍສັງເຂບ ກ່ຽວກັບ ການເຄື່ອນໄຫວຮອບດ້ານ ຂອງຄັງເງິນແຫ່ງຊາດ ປີ 2021 ແລະ ທິດທາງແຜນການປີ 2022;
2. ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາຂະແໜງຄັງເງິນ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022;
3. ສະຫຼຸບການຈັດຕັ້ງປະຕິບັດ ແຜນດຳເນີນງານ ປະຈຳປີ 2021 ກ່ຽວກັບ ການຜັນຂະຫຍາຍ ຄຳສັ່ງວ່າດ້ວຍການເພີ່ມທະວີ ຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານ ໄລຍະ 3 ປີ (2021-2023) ສະບັບເລກທີ 4741/ຄງຊ, ລົງວັນທີ 29 ກັນຍາ 2021;
4. ສະຫຼຸບການຈັດຕັ້ງປະຕິບັດ ວຽກງານກວດກາ-ກວດສອບ ຄັງເງິນ ປະຈຳປີ 2021 ແລະ ທິດທາງແຜນການ ປີ 2022.

ກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນ, ມີເນື້ອໃນຄົບຖ້ວນ ແລະ ໄດ້ຮັບຟັງການປະກອບຄຳເຫັນຈາກຂະນະພະແນກ ເພື່ອແລກປ່ຽນບົດຮຽນ ເນັ້ນໃສ່ການແກ້ໄຂວຽກງານວິຊາສະເພາະ ຂອງຂະແໜງຄັງເງິນເປັນຕົ້ນວຽກກວດກາລາຍຈ່າຍງົບປະມານ, ວຽກບໍລິການຄັງເງິນ, ວຽກຫັນເປັນທັນສະໄໝ ແລະ ວຽກງານການບັນຊີ.

ໄດ້ຮັບຟັງການປະກອບຄຳເຫັນຕໍ່ວຽກງານຄັງເງິນ ຂອງບັນດາກົມລາຍຮັບ, ຫົວໜ່ວຍງົບປະມານ ແລະ ທະນາຄານ ເຊິ່ງຄຳຄິດຄຳເຫັນລ້ວນແລ້ວແຕ່ເປັນປະໂຫຍດສຳຄັນທີ່ສຸດ ເພື່ອເຮັດໃຫ້ສາມາດຈັດຕັ້ງປະຕິບັດວຽກງານຄັງເງິນ ຕິດພັນກັບຫຼາຍພາກສ່ວນ ເຊິ່ງບໍ່ສາມາດຕັດແຍກອອກຈາກກັນໄດ້ ເພື່ອຈະໄດ້ປັບປຸງແກ້ໄຂບັນດາບັນຫາຂໍ້ຄົງຄ້າງຕ່າງໆໃນປີ 2022 ທີ່ຕິດພັນກັບການໃຫ້ບໍລິການ, ການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍງົບປະມານ, ການສະຫຼຸບສົມທຽບຕົວເລກ, ການຫັນວຽກງານຄັງເງິນເປັນທັນສະໄໝ ແລະ ສະພາບການເບີກຈ່າຍເງິນເດືອນ ໃຫ້ພະນັກງານ-ລັດຖະກອນ ຢູ່ຄັງເງິນແຫ່ງຊາດແຕ່ລະຂັ້ນ. ນອກຈາກນັ້ນ ບັນດາຄັງເງິນປະຈຳແຂວງ ໄດ້ປະກອບຄຳເຫັນຕາມຄຳຖາມເຈາະຈີ້ມ ດ້ວຍຄວາມຮັບຜິດຊອບສູງ, ມີລັກສະນະສ້າງສັນ ແລະ ມີການແລກປ່ຽນບົດຮຽນຢ່າງກົງໄປກົງມາ. ທີ່ປະຊຸມໄດ້ພ້ອມກັນຕີລາຄາບັນຫາຄົງຄ້າງຢ່າງຊັດເຈນ ແລະ ໄດ້ຕົກລົງເຫັນດີເປັນເອກະພາບກັນບາງບັນຫາເພື່ອພ້ອມກັນສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າ ດັ່ງນີ້:

1. ເຫັນດີຮັບຮອງເອົາບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານຄັງເງິນ ປະຈຳປີ 2021 ແລະ ທິດທາງແຜນການປີ 2022, ຊຶ່ງສະແດງໃຫ້ເຫັນດ້ານດີ, ຂໍ້ສະດວກ, ຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການປັບປຸງແກ້ໄຂ ແລະ ມອບໃຫ້ຄະນະຮັບຜິດຊອບເນື້ອໃນ ນຳເອົາຄຳຄິດຄຳເຫັນຂອງບັນດາຜູ້ເຂົ້າຮ່ວມກອງປະຊຸມໄປປັບປຸງໃສ່ເນື້ອໃນບົດສະຫຼຸບໃຫ້ຄົບຖ້ວນ;
2. ເຫັນດີຮັບຮອງເອົາສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາຂະແໜງຄັງເງິນ, ແຜນດຳເນີນງານ ກ່ຽວກັບ ການຜັນຂະຫຍາຍ ຄຳສັ່ງວ່າດ້ວຍການເພີ່ມທະວີ ຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານ, ວຽກງານກວດກາ-ກວດສອບ ຄັງເງິນ ປະຈຳປີ 2021 ແລະ ທິດທາງແຜນການ ປີ 2022; ຕໍ່ກັບວຽກງານດັ່ງກ່າວ, ວຽກງານສຳຄັນ ແລະ ຮີບດ່ວນ ແມ່ນວຽກປັບປຸງກົງຈັກການຈັດຕັ້ງຊຶ່ງຕ້ອງໃຫ້ສຳເລັດໃນກາງເດືອນກຸມພາ ປີ 2022 ໂດຍພື້ນຖານ, ວຽກການຫັນເປັນທັນສະໄໝເປັນຕົ້ນ ສຸມໃສ່ພັດທະນາລະບົບຂໍ້ມູນຂ່າວສານຄັງເງິນ (RTIS) ໃຫ້ສາມາດຕອບສະໜອງການຄຸ້ມຄອງເກັບລາຍຮັບງົບປະມານລວມສູນທົ່ວປະເທດຜ່ານລະບົບບັນຊີສັງລວມຄັງເງິນ, ພ້ອມທັງສືບຕໍ່ຜັນຂະຫຍາຍຢູ່ບັນດາຄັງເງິນເມືອງໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການລາຍງານຍອດເຫຼືອເມັດເງິນຂອງລັດ ແລະ ສະຫຼຸບລາຍງານແບບທັນທີ (Auto Realtime);
3. ມອບໃຫ້ພະແນກກວດກາພາຍໃນ ເປັນເຈົ້າການສັງລວມຂໍ້ມູນບັນດາ ຂໍ້ຄົງຄ້າງ ຕາມຜົນການກວດສອບໃຫ້ຄົບຖ້ວນ ແລະ ຈະແຈ້ງ ໂດຍປະສານສົມທົບກັບຫ້ອງການກະຊວງການເງິນ ກ່ຽວ ກັບການຈັດຕັ້ງປະຕິບັດຕາມ ບົດບັນທຶກລະຫວ່າງ ອົງການກວດສອບແຫ່ງລັດ ແລະ ກະຊວງການເງິນ ລົງວັນທີ 7 ມິຖຸນາ 2021;
4. ມອບໃຫ້ພະແນກ/ຂະແໜງ ກວດກາລາຍຈ່າຍງົບປະມານ ປັບປຸງກົນໄກວິທີການ ໃນການກວດກາລາຍຈ່າຍເອກະສານກ່ອນການເບີກຈ່າຍ ໃຫ້ກະທັດຮັດ ວ່ອງໄວ ຖືກຕ້ອງຕາມລະບຽບການ ແລະ ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນການໄດ້ຕາມກຳນົດເວລາ; ສຳລັບ ກໍລະນີລາຍຈ່າຍບໍ່ສອດຄ່ອງກັບລະບຽບການ ເປັນຕົ້ນເອກະສານຊ້ອນທ້າຍບໍ່ຄົບຖ້ວນ ຫຼື ແຜນຄິດໄລ່ຊໍ້າຊ້ອນ ລວມທັງລາຍຈ່າຍບໍ່ຖືກຕ້ອງໃຫ້ໂຈະ ຫຼື ຍົກເລີກລາຍຈ່າຍດັ່ງກ່າວ;
5. ມອບໃຫ້ພະແນກ/ຂະແໜງ ບໍລິການຄັງເງິນ ຕິດຕາມ, ກວດກາການບັນທຶກບັນຊີລາຍຮັບ-ລາຍຈ່າຍ ຂອງຫົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ ເປັນອັນສະເພາະ ພ້ອມທັງສະຫຼຸບສັງລວມຂໍ້ມູນໃຫ້ຂະແໜງງົບປະມານເປັນແຕ່ລະໄລຍະ;
6. ມອບໃຫ້ຄັງເງິນປະຈຳທ້ອງຖິ່ນ ສືບຕໍ່ປັບປຸງແບບແຜນວິທີເຮັດວຽກ-ວິທີນຳພາຂອງຄະນະນຳຄັງເງິນແຂວງ ໂດຍກຳນົດແຈ້ງຄວາມຮັບຜິດຊອບຢ່າງລະອຽດ, ຈະແຈ້ງ ແລະ ສາມາດສ້າງກຳນົດເປັນຕົວຊີ້ວັດ ເພື່ອປະເມີນຜົນພະນັກງານໃນແຕ່ລະປີ;
7. ມອບໃຫ້ຄັງເງິນປະຈຳແຂວງ, ນະຄອນຫຼວງ ສືບຕໍ່ເຜີຍແຜ່ຄຳສັ່ງ ສະບັບເລກທີ 5071/ກງ, ລົງວັນທີ 24 ທັນວາ 2019 ວ່າດ້ວຍມາດຕະການຄຸ້ມຄອງການຈ່າຍລ່ວງໜ້າ ແລະ ການເກັບກູ້ຄືນ, ຫ້າມຈ່າຍລ່ວງໜ້ານອກແຜນງົບປະມານໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຢ່າງເດັດຂາດ, ຫາກມີການຈ່າຍລ່ວງໜ້ານອກແຜນງົບປະມານ ຕ້ອງປະຕິບັດວິໄນຢ່າງເຂັ້ມງວດ; ສຳລັບການຈ່າຍລ່ວງໜ້ານອກແຜນງົບປະມານຜ່ານມາ ໃຫ້ແຍກລະອຽດ ແລະ ກຳນົດມາດຕະການແກ້ໄຂ ເພື່ອສະສາງບັນຊີຄັງເງິນໃຫ້ຫຼຸດລົງຢ່າງຕັ້ງໜ້າ ໂດຍສ້າງແຜນດຳເນີນງານແກ້ໄຂ ຖືເປັນວາລະແຫ່ງຊາດ;
8. ມອບໃຫ້ພະແນກຄຸ້ມຄອງລະບົບຂໍ້ມູນຂ່າວສານ ຍົກຍອດບັນຊີປະຈຳປີ 2021 ເພື່ອໄປເຄື່ອນໄຫວໃນປີ 2022 ໃຫ້ທັນຕາມກຳນົດເວລາ ແລະ ມອບໃຫ້ບັນດາພະແນກອ້ອມຂ້າງຄັງເງິນແຫ່ງຊາດ, ຄັງເງິນປະຈຳແຂວງ, ນະຄອນຫຼວງ ກະກຽມກວດກາການຍົກຍອດບັນຊີທີ່ຈະໄປເຄື່ອນໄຫວໃນປີ 2022 ໃຫ້ຖືກຕ້ອງ; ສຳລັບການສະຫຼຸບຂາດຕົວງົບປະມານປະຈຳປີ 2021 ໃຫ້ແຕ່ລະພາກສ່ວນເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດ ແລະ ສະຫຼຸບໃຫ້ທັນຕາມກຳນົດເວລາ ຕາມນິຕິກຳແຈ້ງການທີ່ໄດ້ສັ່ງໃຫ້ ແລະ ໄດ້ຝຶກອົບຮົມໃຫ້ພະນັກງານບັນຊີຕົວຈິງແລ້ວ;
9. ມອບໃຫ້ຄັງເງິນປະຈຳແຂວງ-ນະຄອນຫຼວງ ແລະ ຄັງເງິນປະຈຳເມືອງ ນຳໃຊ້ລະບົບຂໍ້ມູນຂ່າວສານຄັງເງິນ (RTIS) ໃນການຄຸ້ມຄອງ, ຕິດຕາມ, ສະຫຼຸບລາຍງານ ລາຍຮັບ-ລາຍຈ່າຍ ລວມສູນທຸກແຫຼ່ງເງິນໃນລະບົບຄັງເງິນ ໃຫ້ສາມາດປະຕິບັດໃນປີ 2022 ເປັນຕົ້ນໄປ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;
10. ມອບໃຫ້ຄັງເງິນປະຈຳແຂວງ-ນະຄອນຫຼວງ ສະຫຼຸບ-ສັງລວມ ບັນດາຂໍ້ຄົງຄ້າງຕາມຜົນການກວດສອບໃນແຕ່ລະຂັ້ນ ພ້ອມທັງສ້າງແຜນວຽກຈຸດສຸມ, ສະເໜີກົນໄກວິທີແກ້ໄຂເປັນແຕ່ລະງວດ ແລະ ລາຍງານຄັງເງິນແຫ່ງຊາດເປັນແຕ່ລະຄັ້ງ;
11. ໃຫ້ຄັງເງິນແຫ່ງຊາດ ແລະ ຄັງເງິນປະຈຳທ້ອງຖິ່ນ ສືບຕໍ່ເອົາໃຈໃສ່ໃນການຊຸກຍູ້, ເຜີຍແຜ່ ແລະ ຜັນຂະຫຍາຍການມອບລາຍຮັບ ແລະ ປະຕິບັດລາຍຈ່າຍ ຜ່ານລະບົບທະນາຄານ ເພື່ອຫຼຸດຜ່ອນການຮັບ-ຈ່າຍ ເປັນເງິນສົດຜ່ານລະບົບຄັງເງິນ;

12. ການຈັດຕັ້ງແຜນງົບປະມານແຫ່ງລັດປະຈໍາປີ 2022 ໃຫ້ອີງໃສ່ ຄໍາແນະ ສະບັບເລກທີ 5880/ກງ, ລົງວັນທີ 22 ພະຈິກ 2021 ຢ່າງເຂັ້ມງວດ ແລະ ໃຫ້ຈັດຕັ້ງຜັນຂະຫຍາຍເຂົ້າໃນແຜນດໍາເນີນງານ ຂອງບັນດາພະແນກອ້ອມຂ້າງຄັງເງິນແຫ່ງຊາດ ແລະ ຂະແໜງການ, ບັນດາຄັງເງິນປະຈໍາແຂວງ, ນະຄອນຫຼວງ.

ກອງປະຊຸມໄດ້ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນໍາ ຈາກ ທ່ານ ພູທະນູເພັດ ໄຊສົມບັດ ຄະນະປະຈໍາພັກກະຊວງການເງິນ, ປະທານກວດກາພັກ, ຮອງລັດຖະມົນຕີການເງິນ. ຊຶ່ງທ່ານໄດ້ເນັ້ນໜັກ ວິທີການແກ້ໄຂວຽກງານຈຸດສຸມຂອງຂະແໜງຄັງເງິນ ໂດຍມອບໃຫ້ຄະນະພັກ, ຄະນະນໍາຄັງເງິນແຕ່ລະຂັ້ນ ພ້ອມດ້ວຍພະນັກງານ-ລັດຖະກອນຂະແໜງຄັງເງິນ ນໍາໄປເຜີຍແຜ່ຈັດຕັ້ງຜັນຂະຫຍາຍ ແລະ ກໍານົດໃນແຜນດໍາເນີນງານທີ່ຕົນຮັບຜິດຊອບ ເພື່ອນໍາໄປຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ຄັງເງິນແຕ່ລະຂັ້ນ ສືບຕໍ່ສຶກສາອົບຮົມການເມືອງ-ແນວຄິດ ຂອງພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມເຊື່ອໝັ້ນ, ອຸ່ນອ່ຽນທຸນທ່ຽງ ຮັດແໜ້ນຄວາມສາມັກຄີພາຍໃນ, ຫັນປ່ຽນຈິນຕະນາການໃໝ່, ມີຈັນຍາບັນ, ຈັນຍາທໍາ, ມີສະຕິເຄົາລົບລະບຽບກົດໝາຍ, ມີນໍ້າໃຈເສຍສະຫຼະ, ບໍ່ມີແນວຄິດເອື່ອຍອີງມັກງ່າຍ ພ້ອມກັນເປັນເຈົ້າການຈັດຕັ້ງປະຕິບັດມະຕິກອງປະຊຸມວິຊາການຄັງເງິນຄັ້ງນີ້ໃຫ້ໄດ້ຮັບການປັບປຸງແກ້ໄຂ ແລະ ມີບາດກ້າວໃໝ່;
2. ສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບ ການແກ້ໄຂເສດຖະກິດ ຕາມຈຸດສຸມທີ 3 ໃນການຄຸ້ມຄອງລາຍຈ່າຍງົບປະມານ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ປະຢັດມັດທະຍັດ;
3. ສືບຕໍ່ຊຸກຍູ້ຂະແໜງຄັງເງິນແຕ່ລະຂັ້ນໃນການສ້າງທ່າຫັນປ່ຽນໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງກ່ຽວກັບຄຸນນະພາບການບໍລິການ ແລະ ຍົກສູງຄວາມຮັບຜິດຊອບ ຕໍ່ກັບໜ້າທີ່ການເມືອງ, ວຽກງານວິຊາສະເພາະ ໃຫ້ມີຄຸນນະພາບສູງ ແລະ ວ່ອງໄວ;
4. ຮີບຮ້ອນສ້າງກົນໄກຄຸ້ມຄອງການປັບປຸງການຈັດຕັ້ງ, ການກໍານົດຄັງເງິນປະຈໍາເມືອງ ແລະ ໜ່ວຍບໍລິການຄັງເງິນເມືອງ ໃຫ້ສໍາເລັດຕາມແຜນການ; ກໍານົດມາດຕະຖານຕໍາແໜ່ງງານ ຂອງພະນັກງານໃນແຕ່ລະຂັ້ນໃຫ້ຊັດເຈນ ພ້ອມນັ້ນ ໃຫ້ຍົກລະດັບ ພະນັກງານ-ລັດຖະກອນ ດ້ວຍການຝຶກອົບຮົມວຽກງານວິຊາສະເພາະຕ່າງໆ, ສ້າງຕໍາລາຮຽນ, ຕໍາລາສອນ ເປັນຕົ້ນການບັນຊີ, ການກວດກາບັນຊີ ແລະ ການສ້າງບົດລາຍງານການເງິນ;
5. ໃຫ້ຄັງເງິນແຫ່ງຊາດ ປັບປຸງກົນໄກການຄຸ້ມຄອງທີ່ຕິດພັນກັບລາຍຮັບ-ລາຍຈ່າຍ, ຄ່າທໍານຽມວິຊາການ ແລະ ການກວດກາເອກະສານຊ້ອນທ້າຍທີ່ມີຈໍານວນຫຼາຍ, ມີຄວາມສິ້ນເປືອງ, ການສະສາງຍອດເຫຼືອເງິນ, ການເປີດບັນຊີຢູ່ນອກລະບົບທີ່ຕິດພັນກັບການກວດກາ-ກວດສອບ ຕ້ອງສະສາງບັນຊີດັ່ງກ່າວເປັນແຕ່ລະປີ ໂດຍປະສານສົມທົບຢ່າງໃກ້ສິດກັບບັນດາຫົວໜ່ວຍງົບປະມານ ແລະ ພາກສ່ວນທີ່ກ່ຽວຂ້ອງ;
6. ໃຫ້ຄັງເງິນແຫ່ງຊາດ ແລະ ຄັງເງິນປະຈໍາທ້ອງຖິ່ນ ປັບປຸງກົນໄກການຄຸ້ມຄອງລາຍຮັບງົບປະມານ ໂດຍມີການສົມທຽບກັນເປັນປະຈໍາວັນ, ອາທິດ, ເດືອນ, ງວດ ແລະ ປີ; ຊຶ່ງໃຫ້ພັດທະນາການເຊື່ອມຕໍ່ລະບົບການຄຸ້ມຄອງລາຍຮັບ ແລະ ລະບົບທະນາຄານທີ່ຈັດເກັບລາຍຮັບ ໃຫ້ສາມາດສະສາງໄດ້ແບບທັນທີທັນໃດ; ສໍາລັບລາຍຮັບບໍ່ຮູ້ເນື້ອໃນມອບ ໃຫ້ປະສານສານສົມທົບກັບບັນດາທະນາຄານທີ່ໃຫ້ການບໍລິການເພື່ອແກ້ໄຂ ແລະ ບັນທຶກເປັນລາຍຮັບງົບປະມານໃຫ້ຖືກຕ້ອງ;
7. ມອບໃຫ້ຄັງເງິນແຕ່ລະຂັ້ນເປັນເຈົ້າການ ປະຕິບັດລາຍຈ່າຍບຸລິມະສິດຂອງລັດຖະບານ ເປັນຕົ້ນແມ່ນການເບີກຈ່າຍເງິນເດືອນ, ໃນຂອບເຂດທົ່ວປະເທດ ລະຫວ່າງວັນທີ 25-30 ຂອງເດືອນໃຫ້ທັນຕາມກໍານົດເວລາ; ພ້ອມທັງປະສານສົມທົບເພື່ອປຶກສາຫາລືກັບທະນາຄານ, ຂະແໜງງົບປະມານ, ຂະແໜງພາຍໃນເພື່ອປັບປຸງກົນໄກການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍໃຫ້ມີຄວາມວ່ອງໄວ ໂດຍຫຼຸດຜ່ອນຂອດຂັ້ນ ແລະ ການປະກອບເອກະສານຊ້ອນທ້າຍ;
8. ສືບຕໍ່ແກ້ໄຂບັນດາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຄັງເງິນຂັ້ນທ້ອງຖິ່ນເປັນຕົ້ນ: ການນໍາໃຊ້ເງິນງົບປະມານຂອງລັດບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ການຈ່າຍລ່ວງໜ້າໃນລະບົບຄັງເງິນ ພ້ອມທັງສືບຕໍ່ລົງຕິດຕາມກວດກາຢ່າງເປັນປົກກະຕິ;
9. ສືບຕໍ່ປັບປຸງ, ຜັນຂະຫຍາຍ ແລະ ນໍາໃຊ້ລະບົບຂໍ້ມູນຂ່າວສານຄັງເງິນ (RTIS) ຢູ່ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການຕິດຕາມ, ຄຸ້ມຄອງ ແລະ ສະຫຼຸບລາຍງານ ລາຍຮັບ-ລາຍຈ່າຍ, ແຫຼ່ງເງິນໃຫ້ມີຄວາມຊັດເຈນ, ຖືກຕ້ອງ ແລະ ທັນຕາມກໍານົດເວລາ.

ກອງປະຊຸມໄດ້ດຳເນີນ ເປັນເວລາ ໜຶ່ງວັນເຄິ່ງ ແຕ່ວັນທີ 13-14 ມັງກອນ 2022 ແລະ ໄດ້ປິດລົງໃນເວລາ 12:00 ໂມງຂອງວັນທີ 14 ມັງກອນ 2022 ດ້ວຍຜົນສຳເລັດຕາມລະດັບຄາດໝາຍ.

ດັ່ງນັ້ນ, ຈຶ່ງໄດ້ສ້າງບົດບັນທຶກສະບັບນີ້ໄວ້ ເພື່ອເປັນພື້ນຖານບ່ອນອີງ ໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ນະຄອນຫຼວງວຽງຈັນ, ວັນທີ 09 ກຸມພາ 2022

**ປະທານກອງປະຊຸມ**

ມ.ວັນພອນ ພົມມະສອນ

**ກອງເລຂາ**

**ສິ່ງສຳເນົາ:**

- ຄະນະນຳຄັງເງິນແຫ່ງຊາດ ທ່ານລະ 01 ສະບັບ;
- ຄັງເງິນແຫ່ງຊາດປະຈຳແຂວງ 18 ແຂວງ;
- ພະແນກອ້ອມຂ້າງຄັງເງິນແຫ່ງຊາດ.